ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------===000===-------

ກະຊວງການເງິນ

ເລກທີ 2297/ກງ.

ນະຄອນຫຼວງວຽງຈັນ,ວັນ 29 OCT 2004

# ບົດແນະນຳ

## ກ່ຽວກັບລະບຽບການການປະມູນ ຊື້ໄມ້ ແລະ ຊັບພະຍາກອນປ່າໄມ້ (ໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ) ນຳລັດ ໄມ້ຢືນຕົ້ນ, ເຂດກໍ່ສ້າງພື້ນຖານໂຄງລ່າງຕ່າງໆ

ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 25/ນຍ, ລົງວັນທີ 15/10/2004 ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ປະຈຳສົກປີ 2004-2005.

ເພື່ອເຮັດໃຫ້ການປະມູນຊື້ໄມ້ ແລະ ຊັບພະຍາກອນປ່າໄມ້ (ໄມ້, ໄມ້ເປັນຢາ, ໄມ້ປ່ອງ, ແລະ (ເຄື່ອງປ່າຂອງດົງ) ຢູ່ເຂດກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ມີຄວາມເປັນລະບຽບຮຽບຮ້ອຍ, ມີລັກສະນະເປີດກວ້າງ, ສອດຄ່ອງກັບສະພາບເງື່ອນໄຂຄວາມເປັນຈິງ ແລະ ທັງຮັບປະກັນຜົນປະໂຫຍດທີ່ສົມເຫດສົມຜົນໃຫ້ແກ່ລັດ ແລະ ຜູ້ປະກອບການ.

ລັດຖະມົນຕີວ່າການກະຊວງການເງິນ ອອກລະບຽບ :

## ພາກທີ I

## ຫຼັກການລວມ

**ມາດຕາ 1 : ຈຸດປະສົງ**

ລະບຽບການກ່ຽວກັບການປະມູນ ຊື້ໄມ້ ແລະ ຊັບພະຍາກອນປ່າໄມ້ (ໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ)ນຳລັດ ສະບັບນີ້ ວາງອອກ ເພື່ອແນໃສ່ການ ກຳນົດຫຼັກການພື້ນຖານກ່ຽວກັບການປະມູນ, ເງື່ອນໄຂຂອງຜູ້ເຂົ້າຮ່ວມປະມູນ, ການຈັດຕັ້ງການປະມູນ ແລະ ວິທີການດຳເນີນການປະມູນ.

**ມາດຕາ 2 : ເນື້ອໃນຂອງການຂາຍໄມ້ ແລະ ຊັບພະຍາກອນປ່າໄມ້ ແບບປະມູນ :**

ການຂາຍໄມ້ ແລະ ຊັບພະຍາກອນປ່າໄມ້ (ໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ) ແມ່ນການນຳເອົາໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ຊຶ່ງລວມມີໄມ້ຢືນຕົ້ນ, ໄມ້ເປັນທ່ອນ,ກິ່ງງ່າໄມ້, ຕໍໄມ້ , ຫວາຍ, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງຊະນິດອື່ນໆມາສະເໜີຂາຍແບບເປີດກວ້າງຢູ່ປ່າ ຫລື ຢູ່ສະ

ຫນາມ 2 ຕາມກົນໄກຕະຫຼາດ ໃຫ້ແກ່ບັນດາໂຮງງານເພື່ອຊອກຫາຜູ້ທີ່ໃຫ້ລາຄາສູງກວ່າແນໃສ່ຮັບປະກັນຜົນປະໂຫຍດສູງສຸດຂອງລັດ, ການປະມູນຂາຍໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນເຮັດ ຢ່າງເປີດເຜີຍກວ້າງຂວາງ ທັງນີ້ກໍ່ເພື່ອເຮັດໃຫ້ຜູ້ປະມູນມີໂອກາດ ເຂົ້າຮ່ວມແຂ່ງຂັນທາງດ້ານລາຄາ ແລະ ມີໂອກາດໄດ້ໄມ້, ຫວາຍ, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ຕອບສະໜອງໃຫ້ແກ່ໂຮງງານຂອງຕົນ.

**ມາດຕາ 3 :** ໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ທີ່ຈະນໍາມາປະມູນ :

3.1 ແມ່ນຕົ້ນໄມ້ແລະໄມ້ ທີ່ໄດ້ຜ່ານການສໍາຫລວດກໍານົດເຂດ, ຂື້ນບັນຊີ ໝາຍຕົ້ນ ແລະ ວັດແທກ ຈາກໜ່ວຍວິຊາການຂະແໜງການກະສິກໍາ ແລະ ປ່າໄມ້ .

3.2 ແມ່ນເຄື່ອງປ່າຂອງດົງ ທີ່ນອນ ຢູ່ໃນຂອບເຂດ ກິດຈະການກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ທີ່ໄດ້ຮັບອະນຸມັດຈາກລັດຖະບານ.

ຖ້າວ່າ ເຂດການປະມູນຫາກກ້ວາງໃຫຍ່ ແລະ ມີປະລິມານໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ຢ່າງຫຼວງຫຼາຍ ກໍອາດຈະແບ່ງເປັນຫຼາຍເຂດການປະມູນຕາມຄວາມເໝາະສົມ.

## ພາກທີ II

## ວ່າດ້ວຍເງື່ອນໄຂຂອງຜູ້ເຂົ້າຮ່ວມປະມູນ ແລະ ການສະເໜີເຂົ້າຮ່ວມການປະມູນ

**ມາດຕາ 4 :** ເງື່ອນໄຂພື້ນຕໍ່ຂອງຜູ້ເຂົ້າຮ່ວມການປະມູນ :

4.1 ແມ່ນນັກລົງທຶນພາຍໃນ ຫຼື ຕ່າງປະເທດ ທີ່ມາລົງທຶນຢູ່ລາວ ກໍລ້ວນແຕ່ມີສິດເຂົ້າຮ່ວມການປະມູນ ພາຍໃຕ້ເງື່ອນໄຂຕ່າງໆ ທີ່ໄດ້ກໍານົດໄວ້ ຢູ່ໃນລະບຽບການສະບັບນີ້.

4.2 ແມ່ນຜູ້ທີ່ມີໂຮງງານປຸງແຕ່ງໄມ້, ປຸງແຕ່ງຢາ,ປຸງແຕ່ງເຄື່ອງປ່າຂອງດົງ ເປັນຂອງຕົນເອງ ຫຼື ຜູ້ທີ່ໄດ້ເຊົ່າໂຮງງານຈາກລັດຖະບານ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

4.3 ເປັນຜູ້ມີຈຸດປະສົງໃນການປຸງແຕ່ງໄມ້ເລື່ອຍ, ໄມ້ເຄິ່ງສໍາເລັດຮູບ ແລະ ໄມ້ສໍາເລັດຮູບ, ປຸງແຕ່ງຢາ ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ເພື່ອ ຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

4.4 ເປັນຜູ້ມີຖານະການເງິນພຽງພໍ ແລະ ໄດ້ຮັບການຢັ້ງຢືນຖານະການເງິນຈາກທະນາຄານ ຫຼື ສະຖາບັນການເງິນ ຢູ່ພາຍໃນ ຫຼື ຕ່າງປະເທດ.

4.5 ເປັນຜູ້ທີ່ບໍ່ເຄີຍຖືກດໍາເນີນຄະດີ, ກ່າວໂທດ ຫຼື ຖືກປັບໃໝ ຍ້ອນຝ່າຝືນລະບຽບກົດໝາຍປ່າໄມ້ ແລະ ກົດໝາຍອື່ນໆມາກ່ອນ.

**ມາດຕາ 5 :** ວ່າດ້ວຍສິດ ຂອງຜູ້ເຂົ້າຮ່ວມການປະມູນ.

5.1 ຜູ້ເຂົ້າຮ່ວມການປະມູນ ມີສິດສະເໜີຂໍຮັບຊາບຂໍ້ມູນໄມ້ ແລະ ຂໍ້ມູນ ທີ່ຈໍາເປັນຕ່າງໆ ເພື່ອເປັນບ່ອນອີງໃຫ້ແກ່ການຄົ້ນຄ້ວາ ແລະ ຕັດສິນໃຈຂອງຕົນ.

5.2 ຜູ້ເຂົ້າຮ່ວມການປະມູນ ມີສິດສະເໜີ ເຂົ້າຮ່ວມປະມູນຢູ່ເຂດໃດເຂດໜຶ່ງ ຫຼື ຫຼາຍເຂດ ຖ້າວ່າໂຮງງານຂອງຕົນຍັງມີຄວາມຕ້ອງການວັດຖຸດິບ ແລະ ໄດ້ຮັບການອະນຸຍາດຈາກຄະນະປະມູນ,ແຕ່ຕ້ອງຮັບປະກັນເງື່ອນໄຂຕ່າງໆ ທີ່ລະບຽບການປະມູນວາງອອກ.

5.3 ຜູ້ເຂົ້າຮ່ວມການປະມູນ ມີສິດຂໍຖອນຕົວ ໃນໄລຍະການດຳເນີນການປະມູນແຕ່ຕ້ອງລາຍງານເຫດຜົນຈຳເປັນ ໃຫ້ແກ່ຄະນະກຳມະການປະມູນຊາບ.

5.4 ຫ້າມເດັດຂາດ ບໍ່ໃຫ້ຜູ້ປະມູນ ສົມຮູ້ຮ່ວມຄິດກັນສໍ້ໂກງລາຄາປະມູນ ເຊິ່ງພາໃຫ້ລັດເສຍຜົນປະໂຫຍດ ແລະ ຖືວ່າການກະທຳດັ່ງກ່າວ ເປັນການກະທຳຜິດກົດໝາຍ ຕ້ອງໄດ້ດຳເນີນຄະດີ.

ມາດຕາ 6 : <u>ເງື່ອນໄຂ ແລະ ການປະກອບເອກະສານ ເພື່ອຂໍເຂົ້າຮ່ວມການປະມູນ</u> :

ສະເໜີໃຫ້ແຍກອອກເປັນສອງກໍລະນີຄື:

- ການປະມູນຂາຍໄມ້
- ການປະມູນຂາຍເຄື່ອງປ່າຂອງດົງ

ໂດຍພາຍໃຕ້ເງື່ອນໄຂ ແລະ ການປະກອບເອກະສານການປະມູນ ດັ່ງນີ້:

6.1 ໃບຄຳຮ້ອງ ເຖິງຄະນະກຳມະການປະມູນ , ໂດຍສະແດງເຈດຈຳນົງຢາກເຂົ້າຮ່ວມການປະມູນ ແລະ ຄວາມຕ້ອງການກ່ຽວກັບໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ພ້ອມທັງສະເໜີລາຄາ.

6.2 ໃບອະນຸຍາດດຳເນີນການຜະລິດຂອງໂຮງງານປຸງແຕ່ງໄມ້, ປຸງແຕ່ງຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ທີ່ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງກ່ຽວຂ້ອງອື່ນໆ ໄດ້ອອກໃຫ້ ປະຈຳສົກປີນັ້ນ.

6.3 ໃບທະບຽນທຸລະກິດການຄ້າ ທີ່ຂະແໜງການຄ້າໄດ້ອອກໃຫ້.

6.4 ໃບທະບຽນອາກອນ ທີ່ ຂະແໜງການເງິນໄດ້ອອກໃຫ້.

6.5 ໃບຢັ້ງຢືນ ຖານະການເງິນທີ່ອອກໃຫ້ໂດຍ ທະນາຄານ ຫລື ສະຖາບັນການເງິນໃດໜຶ່ງຢູ່ພາຍໃນ-ຕ່າງປະເທດ ຢ່າງໜ້ອຍແມ່ນເທົ່າກັບມູນຄ່າການປະມູນຕາມລາຄາກາງ.

6.6 ໃບຢັ້ງຢືນ ກ່ຽວກັບການນຳໃຊ້, ຈຳໜ່າຍ ຫຼື ປຸງແຕ່ງໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ (ຜູ້ທີ່ຢັ້ງຢືນການ ປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ ເພື່ອສົ່ງອອກ ຈະໄດ້ຮັບການພິຈາລະນາເປັນພິເສດ).

6.7 ເງິນຄ້ຳປະກັນໃນການເຂົ້າຮ່ວມປະມູນ 2,5 % ຂອງລາຄາກາງທີ່ກຳມະການໄດ້ກຳນົດ ຂຽນເປັນແຊັກ ຫລື ເງິນສົດກໍ່ໄດ້ແລະຈະຖືກຫັກກັບລາຄາຊື້ໄມ້ເລີຍ, ຖ້າປະມູນບໍ່ໄດ້ຈະສົ່ງເງິນດັ່ງກ່າວຄືນ,(ເງິນດັ່ງກ່າວຕ້ອງມອບໃຫ້ຄະນະກຳມະການກ່ອນການເປີດຊອງປະມູນ).

6.8 ຜູ້ທີ່ຊະນະການປະມູນຕ້ອງ ເຮັດສັນຍາຊຸດຄົ້ນໄມ້ກັບຄະນະປະມູນ ພາຍໃນເວລາ 07 ວັນ, ນັບແຕ່ມື້ປະກາດຜົນຂອງການປະມູນ.

6.9 ຜູ້ທີ່ຊະນະການປະມູນຕ້ອງຊຳລະໃຫ້ລັດກ່ອນ 50% ຂອງເງິນຄ່າພັນທະໄມ້ທັງໝົດ ພາຍໃນກຳນົດ 07 ວັນ ນັບແຕ່ມື້ໄດ້ເຊັນສັນຍາຊຸດຄົ້ນໄມ້ກັບຄະນະປະມູນ, ພາຍຫຼັງ

ຂຸດຄົ້ນໄດ້ 50% ຈຶ່ງຊໍາລະງວດທີ II (ຄື: 100% ຂອງມູນຄ່າໄມ້ທັງໝົດ). ຖ້າບໍ່ຊໍາລະຕາມຈໍານວນ ແລະ ກໍານົດເວລາທີ່ເຊັນນໍາກັນ ຈະຖືວ່າສະລະສິດ,ຄະນະປະມູນ ຈະຍຶດເງິນຄໍ້າປະກັນການເຂົ້າຮ່ວມປະມູນມາເປັນຂອງລັດໂດຍບໍ່ມີເງື່ອນໄຂໃດໆທັງສິ້ນ.

6.10 ການສະລະສິດຂອງຜູ້ຊະນະປະມູນລໍາດັບທີໜຶ່ງ, ຄະນະກໍາມະການຈະຍົກສິດໃຫ້ຜູ້ທີ່ສະເໜີລາຄາປະມູນໄດ້ລໍາດັບທີສອງ ໂດຍອັດຕະໂນມັດ.

6.11 ພາຍຫຼັງຜູ້ຊະນະການປະມູນຊໍາລະເງິນ 50 % ແລ້ວ, ຜູ້ຊະນະການປະມູນຕ້ອງກະກຽມ ແລະ ດໍາເນີນການຂຸດຄົ້ນ. ໄມ້ທີ່ຂຸດຄົ້ນແລ້ວ ຕ້ອງລາກແກ່ໄມ້ອອກມາລະໜາມ II ເພື່ອມີການວັດແທກ ແລະ ຄິດໄລ່ບໍລິມາດຄືນໃໝ່. ກໍລະນີທີ່ ບໍລິມາດໄມ້ ຫາກລື່ນ ຫຼື ຫຼຸດ 5% , ທັງສອງຝ່າຍ (ລັດ ແລະ ຜູ້ປະກອບການ) ຕ້ອງປຶກສາຫາລືນໍາກັນ ເພື່ອຮັບປະກັນຄວາມເປັນທໍາ ແກ່ທັງສອງຝ່າຍ.

## ພາກທີ III

## ວ່າດ້ວຍການຈັດຕັ້ງ ແລະ ໜ້າທີ່ ຂອງຄະນະກໍາມະການປະມູນ.

ມາດຕາ 7 : <u>ການຈັດຕັ້ງ ຂອງ ຄະນະກໍາມະການ ປະມູນ</u> :

7.1 ມອບໃຫ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ຈັດຕັ້ງຄະນະກໍາມະການປະມູນຂາຍໄມ້ຂອງລັດຂຶ້ນ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຂະແໜງການກ່ຽວຂ້ອງຂອງແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ເປັນຕົ້ນແມ່ນ ພະແນກການເງິນ, ພະແນກການຄ້າ, ພະແນກກະສິກໍາແລະປ່າໄມ້ ແລະ ທະນາຄານ.

7.2 ຄະນະກໍາມະການປະມູນດັ່ງກ່າວ ແມ່ນຢູ່ພາຍໃຕ້ການຊີ້ນໍາຂອງທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ຫົວໜ້າເຂດພິເສດ ຫຼື ຜູ້ຮອງ

ມາດຕາ 8 : <u>ໜ້າທີ່ຕົ້ນຕໍ ຂອງ ຄະນະກໍາມະການປະມູນ</u> :

8.1 ເກັບກໍາຂໍ້ມູນກ່ຽວກັບ ຜົນການສໍາຫຼວດ ແບ່ງເຂດຂຸດຄົ້ນ, ການຄິດໄລ່ ຫຼື ຄາດຄະເນບໍລິມາດ ແລະ ຄຸນນະພາບໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃຫ້ແກ່ການຄິດໄລ່ລາຄາກາງ, ການວາງລະບຽບຄຸ້ມຄອງການຂຸດຄົ້ນ ແລະ ການຈັດຕັ້ງການປະມູນ.

8.2 ຮ່າງບັດເຊີນການເຂົ້າຮ່ວມການປະມູນ, <u>ອອກຂໍ້ແນະນໍາລະບຽບການປະມູນ ຕາມມາດຕາ06</u>, ກະກຽມເອກະສານຕ່າງໆ ກ່ຽວກັບການປະມູນ ແລະ ແຈກຢາຍຊອງປະມູນໃຫ້ຜູ້ທີ່ສົນໃຈເຂົ້າຮ່ວມການປະມູນ.

8.3 ຮັບຄໍາຮ້ອງ ແລະ ຊອງປະມູນ ຈາກ ຜູ້ສະເໜີຂໍເຂົ້າຮ່ວມການປະມູນ.

8.4 ສະຫຼຸບລາຍງານຜົນຂອງການປະມູນໃຫ້ ທ່ານເຈົ້າແຂວງ, ທ່ານເຈົ້າຄອງນະຄອນ ແລະ ທ່ານຫົວໜ້າເຂດພິເສດ ຫຼື ຜູ້ຮອງ ເພື່ອພິຈາລະນາ ແລະ ຮັບຮອງເອົາ.

8.5 ແຈ້ງຜົນຂອງການປະມູນ ໃຫ້ຜູ້ເຂົ້າຮ່ວມການປະມູນ ໃຫ້ທັນກັບສະພາບການ.

8.6 ໃຫ້ຄໍາແນະນໍາ ແລະ ແກ້ໄຂ ຂໍ້ຂ້ອງໃຈຕ່າງໆ ໃຫ້ແກ່ຜູ້ສົນໃຈເຂົ້າຮ່ວມການປະມູນ ແລະ ຜູ້ເຂົ້າຮ່ວມການປະມູນ.

## ພາກທີ IV
## ວ່າດ້ວຍວິທີດຳເນີນການປະມູນ.

ມາດຕາ 9 : ການເປີດຊອງປະມູນ :

9.1 ການເປີດຊອງປະມູນຕ້ອງເປີດຕາມວັນ, ເວລາ ແລະ ສະຖານທີ່ ທີ່ຄະນະກຳມະການປະມູນໄດ້ກຳນົດໄວ້ໃນຈົດໝາຍເຊີນເຂົ້າຮ່ວມການປະມູນ.

9.2 ການເປີດຊອງປະມູນຕ້ອງເປີດຊ້ອງໜ້າການເຂົ້າຮ່ວມຂອງຄະນະກຳມະການປະມູນຢ່າງນ້ອຍ 2/3 ຂຶ້ນໄປ ແລະ ຜູ້ເຂົ້າຮ່ວມການປະມູນ.

ມາດຕາ 10 : ການຕີລາຄາຜົນການປະມູນ :

ການຕີລາຄາຜົນການປະມູນ ໃຫ້ອີງໃສ່ລາຄາກາງເປັນຫຼັກ, ຜູ້ທີ່ໃຫ້ລາຄາສູງກ່ວາໝູ່ແມ່ນຜູ້ຊະນະການປະມູນ, ແຕ່ໃນກໍລະນີຜູ້ຊະນະການປະມູນຜູ້ທີ່1 ບໍ່ມີເງື່ອນໄຂປະຕິບັດ, ໃຫ້ຖືເອົາຜູ້ຊະນະການປະມູນຜູ້ທີ່2 ເປັນຜູ້ຊະນະການປະມູນ ແລະ ຖ້າຜູ້ຊະນະການປະມູນຜູ້ທີ່2 ບໍ່ມີເງື່ອນໄຂປະຕິບັດ ໃຫ້ຍົກເລີກການປະມູນ ແລະ ຄະນະປະມູນຕ້ອງລາຍງານຂໍຄວາມເຫັນນຳລັດຖະມົນຕີກະຊວງການເງິນ.

ມາດຕາ 11 : ໜ້າທີ່ຂອງ ຜູ້ຊະນະການປະມູນມີດັ່ງນີ້ :

11.1 ມາເຊັນສັນຍາ ຂຸດຄົ້ນໄມ້, ໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ນຳຄະນະປະມູນ ພາຍໃນກຳນົດ 07 ວັນ ຫຼັງຈາກສຳເລັດການປະມູນ.

11.2 ພາຍຫຼັງເຊັນສັນຍາຂຸດຄົ້ນແລ້ວ, ກ່ອນຈະເລີ່ມຕົ້ນການຂຸດຄົ້ນ ຕ້ອງຊຳລະເງິນລ່ວງໜ້າ 50%, ສ່ວນອີກ 50% ແມ່ນພາຍຫຼັງຂຸດຄົ້ນໄມ້ໄດ້ 50% ຂອງບໍລິມາດໄມ້ທັງໝົດ.

11.3 ສຳລັບການຂຸດຄົ້ນໄມ້ເປັນຢາ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ກໍໃຫ້ປະຕິບັດຮູບການຊຳລະຄືກັນກັບການຂຸດຄົ້ນໄມ້ທົ່ວໄປ, ຖ້າບໍລິມາດໄມ້ເປັນຢາ, ໄມ້ປ່ອງ ແລະເຄື່ອງປ່າຂອງດົງ ທີ່ໄດ້ຂຸດຄົ້ນຕົວຈິງ ມີການຫຼຸດ ຫຼື ລື່ນການ 05%ຂອງບໍລິມາດທີ່ໄດ້ກຳນົດໄວ້ໃນສັນຍາ, ຖ້າເກີນ ຜູ້ຊື້ ຕ້ອງຈ່າຍເພີ່ມໃຫ້ລັດ ຫຼື ຖ້າຫຼຸດ ລັດຈະສົ່ງເງິນຄືນ ເພື່ອໃຫ້ມີຄວາມຍຸດຕິທຳ ທັງສອງຝ່າຍ.

11.4 ຜູ້ຊະນະການປະມູນ ຕ້ອງປະຕິບັດຕາມກົດໝາຍປ່າໄມ້ ແລະ ນິຕິກຳອື່ນໆ ທີ່ລັດວາງອອກ.

## ພາກທີ V
## ວ່າດ້ວຍການຈັດຕັ້ງປະຕິບັດ

ມາດຕາ 12 : ມອບໃຫ້ພະແນກການເງິນແຂວງ, ນະຄອນຫຼວງ ແລະ ເຂດພິເສດເປັນຜູ້ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້,ພະແນກການຄ້າແຂວງ, ແລະ ພາກສ່ວນກ່ຽວຂ້ອງຂອງແຂວງ ຈັດຕັ້ງປະຕິບັດ ລະບຽບການສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 13 : ລະບຽບການສະບັບນີ້ ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ,

ຈັນສີ ໂພສີຄຳ